## 1. ຄວາມເປັນມາ

ດັ່ງທີ່ຮັບຮູ້ນຳກັນແລ້ວວ່ານ້ຳ ແມ່ນເປັນຊັບພະຍາກອນທຳມະຊາດສະນິດໜຶ່ງທີ່ມີຈຳກັດ ແລະມັນກໍ່ມີຄວາມສຳຄັນຕໍ່ຄົນໃນການດຳລົງຊີວິດປະຈຳວັນ ແລະການພັດທະນາເສດຖະກິດສັງຄົມຂອງພວກເຮົາ ໂດຍສະເພາະຕໍ່ການຜະລິດກະສິກຳ.

ເຖິງແມ່ນວ່າ ປະເທດລາວເຮົາຈະອຸດົມສົມບູນໄປດ້ວຍ ແມ່ນ້ຳລຳເຊແຕ່ວ່າກໍ່ມີການຫົດແຫ້ງໄປ ອີງຕາມລະດູການ ແລະການນຳໃຊ້, ເຊິ່ງພວກເຮົາເອງແມ່ນບໍ່ສາມາດທີ່ຈະຜະລິດທົດແທນໄດ້.

ໃນວຽກງານການຜະລິດທາງດ້ານກະສິກຳ, ນ້ຳແມ່ນເປັນປັດໃຈຫຼັກໃນດ້ານປູກຝັງກໍ່ຄືລ້ຽງສັດ. ພືດມີຄວາມຕ້ອງການນ້ຳໃນການຜະລິດທາດອາຫານ ແຕ່ກໍ່ບໍ່ແມ່ນວ່າພືດທຸກຊະນິດຈະຕ້ອງການນ້ຳ ໃນປະລິມານທີ່ເທົ່າກັນສະເໝີໄປ, ຄວາມຕ້ອງການນ້ຳຂອງພືດແມ່ນຂຶ້ນກັບຊະນິດຂອງພືດ ແລະສະພາບພູມມີອາກາດເປັນຕົ້ນຕໍ່, ສະນັ້ນການຈັດພິມເອກະສານກ່ຽວກັບຄວາມຕ້ອງການນ້ຳຂອງພືດແມ່ນມີຄວາມສຳຄັນທີ່ສຸດ ເນື່ອງຈາກການສະໜອງນ້ຳໃຫ້ແກ່ພືດໃນປະລິມານທີ່ຫຼາຍເກີນໄປກໍ່ຈະເຮັດໃຫ້ມີຜົນເສຍໄດ້ເຊັ່ນກັນເອກະສານສະບັບນີ້ແມ່ນມີຈຸດປະສົງ ເພື່ອສະເໜີໃຫ້ຮູ້ກ່ຽວກັບຄວາມຕ້ອງການນ້ຳຂອງບາງຊະນິດພືດ ແລະເຂດການຜະລິດເປັນຫຼັກ. ຫວັງວ່າຂໍ້ມູນເຫຼົ່ານີ້ຈະເປັນປະໂຫຍດສຳລັບທ່ານ ຜູ້ທີ່ມີຄວາມຕ້ອງການເພື່ອນຳໃຊ້ເຂົ້າໃນການຄິດໄລ່, ຄຳນວນການໃຫ້ນ້ຳແກ່ພືດຊະນິດຕ່າງໆ.

| ແຂວງ | ຊະນິດພືດ ( ຫົວໜ່ວຍ: ມ³/ຮຕ ) | | | | | | | |
|---|---|---|---|---|---|---|---|---|
| | ເຂົ້າ | ສາລີ | ຖົ່ວເຫຼືອງ | ຖົ່ວຂຽວ | ຖົ່ວດິນ | ຝ້າຍ | ໝາກໂມ | ພືດຜັກ |
| ຫຼວງພະບາງ | 3.750 | 0 | 0 | 0 | 0 | 2.88 | 2.6 | 0 |
| ອຸດົມໄຊ | 3.750 | 0 | 0 | 0 | 0 | 2.88 | 2.6 | 0 |
| ຫຼວງນ້ຳທາ | 3.750 | 0 | 0 | 0 | 0 | 2.88 | 2.6 | 0 |
| ໄຊຍະບູລີ | 3.500 | 0 | 0 | 0 | 0 | 1.63 | 0 | 0 |
| ບໍ່ແກ້ວ | 3.500 | 0 | 0 | 0 | 0 | 1.63 | 0 | 0 |
| ຊຽງຂວາງ | 2.820 | 0 | 0 | 0 | 0 | 1.81 | 0 | 0 |
| ຜົ້ງສາລີ | 2.820 | 0 | 0 | 0 | 0 | 1.81 | 0 | 0 |
| ຫົວພັນ | 2.820 | 0 | 0 | 0 | 0 | 1.81 | 0 | 0 |

**ໝາຍເຫດ:** ຕາຕະລາງຂ້າງເທິງແມ່ນຄວາມຕ້ອງການນ້ຳຂອງພືດໃນລະດູຝົນ

| ແຂວງ | ລະດູປູກພືດ ( ຫົວໜ່ວຍ: ມ³/ຮຕ ) | | | | | | | |
|---|---|---|---|---|---|---|---|---|
| | ເຂົ້າ | ສາລີ | ຖົ່ວເຫຼືອງ | ຖົ່ວຂຽວ | ຖົ່ວດິນ | ຝ້າຍ | ໝາກໂມ | ພືດຜັກ |
| ຫຼວງພະບາງ | 10.130 | 3.191 | 3.563 | 1.889 | 3.136 | 5.027 | 3.959 | 2.958 |
| ອຸດົມໄຊ | 10.130 | 3.191 | 3.563 | 1.889 | 3.136 | 5.027 | 3.959 | 2.956 |
| ຫຼວງນ້ຳທາ | 10.130 | 3.191 | 3.563 | 1.889 | 3.136 | 5.027 | 3.959 | 2.956 |
| ໄຊຍະບູລີ | 9.960 | 3.168 | 3.524 | 1.921 | 3.111 | 4.847 | 3.920 | 2.549 |
| ບໍ່ແກ້ວ | 9.960 | 3.168 | 3.524 | 1.921 | 3.111 | 4.847 | 3.920 | 2.549 |
| ຊຽງຂວາງ | 11.840 | 4.472 | 4.954 | 2.853 | 4.380 | 7.023 | 5.469 | 3.606 |
| ຜົ້ງສາລີ | 11.840 | 4.472 | 4.954 | 2.853 | 4.380 | 7.023 | 5.469 | 3.603 |
| ຫົວພັນ | 11.840 | 4.472 | 4.954 | 2.853 | 4.380 | 7.023 | 5.469 | 3.603 |

**ໝາຍເຫດ:** ຕາຕະລາງຂ້າງເທິງແມ່ນຄວາມຕ້ອງການນ້ຳຂອງພືດໃນລະດູແລ້ງ

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

# ຂໍ້ແນະນຳ

## ຄວາມຕ້ອງການນ້ຳຂອງພືດ (ເຂດພາກເໜືອ)



ຈັດຕັ້ງປະຕິບັດໂດຍ: **CETDU**
(ໜ່ວຍງານພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)
ຮ່ວມກັບ:
ໂຄງການ ສົ່ງເສີມ ກະສິກຳ **(LEAP)**